ພິທີເຊັນສັນຍາ

ລະຫວ່າງ ກະຊວງການເງິນ ແລະ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃນວັນທີ 10 ພະຈິກ 2021 ທີ່ຜ່ານມາ ກະຊວງການເງິນ ກົມສ່ວຍສາອາກອນ ໄດ້ຈັດຕັ້ງພິທີເຊັນສັນຍາ ລະຫວ່າງ ກົມສ່ວຍສາອາກອນ ແລະ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໃນຫົວຂໍ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກດ້ານພາສີ-ອາກອນຕໍ່ຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກສິນຄ້າ ແລະ ເຄື່ອງຂອງ.

ໃນພິທີດັ່ງກ່າວກະຊວງການເງິນໄດ້ມີການປຶກສາຫາລື, ຄົ້ນຄວ້າກົນໄກການຄຸ້ມຄອງ, ອຳນວຍຄວາມສະດວກດ້ານພາສີ-ອາກອນ, ການຄ້າ, ການລົງທຶນໃຫ້ຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກສິນຄ້າ ແລະ ເຄື່ອງຂອງ ຜ່ານດ່ານຊາຍແດນ. ພ້ອມທັງສ້າງຄວາມສະດວກສະບາຍໃນການຊຳລະອາກອນຂອງຫົວໜ່ວຍທຸລະກິດຜ່ານລະບົບ TaxRIS, ສຳລັບບໍລິສັດທີ່ເຂົ້າຮ່ວມ ຈະໄດ້ຮັບການອຳນວຍຄວາມສະດວກຈາກລັດຖະບານ ໃນການດຳເນີນການກວດກາສິນຄ້າ, ການຮັບຮອງເອກະສານ ການແຈ້ງພາສີລ່ວງໜ້າຕາມລະບຽບການ.

ໃນພິທີເຊັນສັນຍາດັ່ງກ່າວຕາງໜ້າຂອງກະຊວງການເງິນເຂົ້າຮ່ວມເຊັນສັນຍາ ໂດຍທ່ານ ປອ ບຸນເຫຼືອ ສິນໄຊ ວໍລະວົງ ຮອງລັດທະມົນຕີ ກະຊວງການເງິນ ແລະ ຕາງໜ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍທ່ານ ວັດ ດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.






TOYOTA
CSC
ພິທີເຊັນສັນຍາ